STAY SAFE MN

# ຮັບສັກຢາເຂັມທີສອງຂອງວັກຊີນໂຄວິດ-19 ໂມເດີນນ້າ

6/15/2021

**ມັນເປັນສິ່ງທີ່ສຳຄັນຫຼາຍທີ່ຕ້ອງສັກຢາສອງເຂັມຂອງວັກຊີນໂມເດີນນ້າ, ທີ່ຫ່າງກັນ 28 ມື້, ເພື່ອປ້ອງກັນທີ່ດີທີ່ສຸດຕໍ່ກັບໂຄວິດ-19.**

ຖ້າທ່ານບໍ່ສາມາດຈັດຕາຕະລາງນັດໝາຍ ຫຼື ບໍ່ໄດ້ໄປຕາມນັດໝາຍສຳລັບການສັກຢາເຂັມທີສອງ, ນີ້ແມ່ນສິ່ງທີ່ທ່ານຄວນເຮັດ:

- ກ່ອນອື່ນໝົດ, ໃຫ້ກວດເບິ່ງກັບຜູ້ໃຫ້ບໍລິການສັກຢາເຂັມທຳອິດໃຫ້ກັບທ່ານເພື່ອເບິ່ງວ່າທ່ານສາມາດຈັດຕາລາງນັດໝາຍໄດ້ຫຼືບໍ່.
- ເຂົ້າໄປຄຣີນິກທີ່ທ່ານໄປເປັນປະຈຳ ຫຼື ຄຣີນິກໃດໜຶ່ງທີ່ຮ່ວມໂຄງການເພື່ອເບິ່ງວ່າທ່ານສາມາດສັກຢາເຂັມທີສອງໄດ້ບໍ່.

| ຄລີນິກທີ່ຮ່ວມໂຄງການ | ຈັດຕາຕະລາງນັດໝາຍ |
|---|---|
| Allina | www.allinahealth.org/coronavirus-covid-19/vaccines |
| HealthPartners/Park Nicollet | www.healthpartners.com/covid-19/vaccine-faqs/ |
| Hennepin Healthcare | www.hennepinhealthcare.org/covid-19-vaccine-information |
| M Health Fairview | www.mhealthfairview.org/covid19/covid19-vaccine |
| North Memorial | www.northmemorial.com/vaccine/ |
| Children's MN | www.childrensmn.org/covidshot/ |

- ກວດເບິ່ງກັບຮ້ານຂາຍຢາທ້ອງຖິ່ນ, ເພື່ອເບິ່ງວ່າທ່ານສາມາດຈັດຕາລາງນັດໝາຍເພື່ອຮັບຢາວັກຊີນໄດ້ຫຼືບໍ່. ຮ້ານຂາຍຢາຫຼາຍແຫ່ງອະນຸຍາດໃຫ້ເຂົ້າໄປເພື່ອນັດໝາຍ, **ແຕ່ວ່າສິ່ງສຳຄັນແມ່ນຕ້ອງໂທກ່ອນລ່ວງໜ້າ** ເພື່ອໃຫ້ແນ່ໃຈວ່າພວກເຂົາມີວັກຊີນໂມເດີນນ້າ, ຫຼື ຄົ້ນຫາວັກຊີນໂມເດີນນ້າທີ່ມີໃຫ້ໃກ້ກັບທ່ານ: ມີໃຫ້ທີ່ໃກ້ກັບທ່ານ Vaccines.gov ຄົ້ນຫາວັກຊີນ.
- ຕິດຕໍ່ ພະແນກສາທາລະນະສຸກໃນເຂດຂອງທ່ານ ເພື່ອເບິ່ງວ່າພວກເຂົາມີວັກຊີນໂມເດີນນ້າ ຫຼືບໍ່: ຄົ້ນຫາພະແນກສາທາລະນະສຸກໃນເຂດທ້ອງຖິ່ນ ຫຼື ຄະນະບໍລິຫານສຸຂະພາບຊຸມຊົນ (www.health.state.mn.us/communities/practice/connect/findlph.html).

ທ່ານຢ່າລືມນຳເອົາບັດສັກວັກຊີນຂອງທ່ານມາພ້ອມ ເພື່ອທີ່ທ່ານຈະແຈ້ງໃຫ້ພວກເຂົາຮູ້ວັນທີທີ່ທ່ານໄດ້ຮັບວັກຊີນໂມເດີນນ້າ ເຂັມທຳອິດ. ຖ້າທ່ານເຮັດບັດສັກຢາວັກຊີນເສຍ, ຄຣີນິກ ຫຼື ຮ້ານຂາຍຢາອາດຈະກວດເບິ່ງບັນທຶກການສັກຢາຂອງທ່ານຄືນ ໃໝ່, ຫຼື ທ່ານສາມາດຂໍສຳເນົາຂອງບັນທຶກການສັກຢາຂອງທ່ານຈາກພະແນກສາທາລະນະສຸກລັດມິນນີໂຊຕ້າ ໂດຍການເຂົ້າ ໄປທີ່ ເວັບໄຊທ໌ຊອກຫາບັນທຶກການສັກຢາຂອງຂ້ອຍ (www.health.state.mn.us/people/immunize/miic/records.html). ມັນແມ່ນຂໍ້ມູນດຽວກັນກັບບັດສັກຢາວັກຊີນຂອງ ທ່ານ.

ຖ້າທ່ານມີຄຳຖາມກ່ຽວກັບຢາວັກຊີນໂຄວິດ-19, ກະລຸນາໂທຫາພະແນກສາທາລະນະສຸກລັດມິນນີໂຊຕ້າ (MDH) ສາຍດ່ວນໂຄວິດ-19: ທີ່ 833-431-2053.

MINNESOTA

Minnesota Department of Health | health.mn.gov | 651-201-5000
625 Robert Street North PO Box 64975, St. Paul, MN 55164-0975 (Lao)